# ຕ້ອງການເປັນຮຸ້ນສ່ວນກັບພວກເຮົາບໍ?

ໃຫ້ພວກເຮົາຊ່ວຍທ່ານສ້າງຄວາມແຕກຕ່າງຢູ່ໃນຊຸມຊົນທ້ອງຖິ່ນຂອງທ່ານເນື່ອງຈາກພວກເຮົາເຮັດວຽກຮ່ວມກັນເພື່ອໃຫ້ເປັນຄາລິຟໍເນຍທີ່ປາສະຖາອຸປະສັກ. CCDA ໃຊ້ຄວາມພະຍາຍາມລວມຂອງຮຸ້ນສ່ວນທາງຍຸດທະສາດທັງໝົດຢູ່ໃນເຄືອຂ່າຍເພື່ອສົ່ງເສີມການເຂົ້າເຖິງສຳລັບທຸກຄົນຢ່າງມີປະສິດທິພາບ.



## ອົງກອນຂອງທ່ານມີເປົ້າໝາຍທົ່ວໄປຢູ່ໃນໃຈບໍ?

## ເຊື່ອມຕໍ່ກັບພວກເຮົາມື້ນີ້!

# ຕິດຕໍ່ຫາພວກເຮົາ.


(916) 319-9974

400 R Street, Suite 310
Sacramento, CA 95811

ccda@dgs.ca.gov

www.dgs.ca.gov/CCDA


CCDA | California Commission on Disability Access

## *ຄາລິຟໍເນຍປາສະຈາກອຸປະສັກ, ເຂົ້າເຖິງໄດ້*

ໂອກາດເທົ່າທຽມກັນ ແລະ ລວມເອົາທັງໝົດສຳລັບທຸກຄົນ!



## ພາລະກິດຂອງພວກເຮົາ.

ເພື່ອສົ່ງເສີມການເຂົ້າເຖິງຄົນພິການຢູ່ໃນຄາລິຟໍເນຍຜ່ານການສຶກສາ, ການປຶກສາຫາລື ແລະ ການຮ່ວມມືກັບພາກສ່ວນກ່ຽວຂ້ອງ.

## ກ່ຽວກັບພວກເຮົາ.

ສ້າງຕັ້ງຂຶ້ນໃນປີ 2009, ຄະນະກຳມະການລັດຄາລິຟໍເນຍວ່າດ້ວຍການເຂົ້າເຖິງຄວາມພິການ ຫຼື California Commission on Disability Access (CCDA) ເຮັດໜ້າທີ່ເປັນແຫຼ່ງຂໍ້ມູນໃຫ້ແກ່ສັງຄົມ ແລະ ເປັນຂະແໜງຄົ້ນຄວ້າວິໄຈໜຶ່ງໂດຍການເກັບກຳ ແລະ ວິເຄາະຄຳຮ້ອງຮຽນທາງດ້ານກົດໝາຍໃນທຸກການລະເມີດການຄວາມສາມາດເຂົ້າເຖິງຕົວຈິງ ແລະ ທາງເວັບໄຊທີ່ຖືກກ່າວຫາໃນລະຫວ່າງສະຖານດຳເນີນທຸລະກິດຕ່າງໆຢູ່ໃນລັດຄາລິຟໍເນຍ.

## ພວກເຮົາບໍລິການໃຜ.

CCDA ບໍລິການຊຸມຊົນພິການ, ທຸລະກິດ, ການສ້າງມືອາຊີບ, ຊຸມຊົນກົດໝາຍ ແລະ ລັດຖະບານທ້ອງຖິ່ນ.
ພວກເຮົາເຊື່ອວ່າໂດຍການເຮັດວຽກຮ່ວມກັນກັບບັນດາຜູ້ທີ່ເຮົາບໍລິການ, ພວກເຮົາສາມາດຫຼຸດຄວາມຮຸນແຮງການຮ້ອງຮຽນການເຂົ້າເຖິງລະຫວ່າງທຸລະກິດໂດຍການໃຫ້ຊັບພະຍາກອນ ແລະ ເຄື່ອງມື.

## ສິ່ງທີ່ພວກເຮົາເຮັດ.

ພວກເຮົາເກັບກຳຂໍ້ມູນການລະເມີດການເຂົ້າເຖິງເພື່ອກຳນົດໂອກາດການເຂົ້າເຖິງການສຶກສາສຳລັບສັງຄົມ ແລະ ພັດທະນາເຄື່ອງມືການເຂົ້າເຖິງສຳລັບທຸລະກິດ, ການສ້າງມືອາຊີບ ແລະ ພາກສ່ວນກ່ຽວຂ້ອງທີ່ຈະນຳໃຊ້.
ພວກເຮົາປະສານງານກັບລັດຖະບານຂອງລັດ ແລະ ທ້ອງຖິ່ນເພື່ອຈັດຕັ້ງປະຕິບັດໂຄງການເຂົ້າເຖິງເພື່ອຫຼຸດອຸປະສັກການເຂົ້າເຖິງໃຫ້ມີໜ້ອຍທີ່ສຸດໃນລະຫວ່າງສະຖານດຳເນີນທຸລະກິດຢູ່ໃນຊຸມຊົນຂອງພວກເຂົາ.

## ເຂົ້າຮ່ວມພົວພັນ.

CCDA ເປັນເຈົ້າພາບຈັດການປະຊຸມສັງຄົມ, ເວທີ ແລະ ງານໂຄສະນາເຂົ້າເຖິງທີ່ສາມາດເຂົ້າເຖິງໄດ້ເປັນປົກກະຕິ. ເຂົ້າຮ່ວມໜຶ່ງໃນງານສັງຄົມຂອງພວກເຮົາເພື່ອຮຽນຮູ້ກ່ຽວກັບກິດຈະກຳຫຼ້າສຸດຂອງພວກເຮົາ.